ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄ້ຳນຄຸ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 138 /ລອທ
ນະຄອນຫຼວງວຽງຈັນ,ເລກທີ: 14 OCT 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ : ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ປະຈຳໄຕມາດ3 ປີ 2025.

- ອີງຕາມ ລະບຽບວ່າດວ້ຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 529/ຕລຊລ, ລົງວັນທີ 22 ເມສາ 2025
- ອີງຕາມ ໜັງສືແຈ້ງການ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນ ສະບັບເລກທີ 1635/ຕລຊລ,ລົງວັນທີ 13 ຕຸລາ 2025.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ ກ່ຽວກັບ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ໃນຊ່ວງປະຈຳໄຕມາດ3 ປີ 2025 ທີ່ຜ່ານມາ. ຜ່ານການດຳເນີນທຸລະກິດ ເຫັນວ່າ ບໍລິສັດ ມີລາຍຮັບເພີ່ມຂຶ້ນ ຈາກການຂາຍສິນຄ້າ ແລະ ການບໍລິການ ຜະລິດຕະພັນ. ເພີ່ມຂຶ້ນໃນອັດຕາສ່ວນ 29,16% ເມື່ອທຽບໃສ່ກັບໄຕມາດທີ່ຜ່ານມາ ເຊິ່ງເປັນມູນຄ່າທັງໝົດ 11,914.80 ລ້ານກີບ ການເພີ່ມຂຶ້ນດັ່ງກ່າວໄດ້ມາຈາກການຂາຍສິນຄ້າ ດັ່ງນີ້:

ລາຍການສິນຄ້າ	ລາຍໄດ້(ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ (ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ (%)
ນ້ຳມັນປາມດິບCPO	10,203.30	2,023.30	21.93
ຕົ້ນກ້າປາມ	39.70	(82.70)	(0.90)
ກາກປາມ	1,418.90	917.50	9.94
ປຸ໋ຍ	229.0	(155.20)	(1.68)
ລາຍໄດ້ອື່ນໆ	23.90	(12.90)	(0.13)
ລວມ	11,914.8	2,690	29.16

❖ ບໍລິສັດຈະສືບຕໍ່ແຜນການດຳເນີນທຸລະກິດ

- ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດບວກກັບ ຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025.
- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025
- ແຜນການຂາຍປຸ໋ຍ ໃນປີ 2025 ບໍລິສັດໄດ້ສົ່ງເສີມຊາວກະສິກອນທີ່ເຮັດກະສິກຳອື່ນໆ ເຊັ່ນ: ເຂົ້າ, ມັນຕົ້ນ, ຢາງພາລາ, ແລະອື່ນໆເພື່ອເພີ່ມຍອດຂາຍ.
- ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2025.
- ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິຈານແລະນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ
- ຍິ່ງໄປກວ່ານັ້ນ, ບໍລິສັດ ໄດ້ຄົ້ນຄວ້າຫາເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ເພື່ອຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການ ຜະລິດຕໍ່ໆໄປ.

ດັ່ງນັ້ນ, ຈຶ່ງເຮັດແຜນປັບປຸງສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ຜູ້ອຳນວຍການໃຫ່ຍ

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ນະຄອນ ຫຼວງ

ປອ. ເສດ ພັດທະນະບາດ